ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງຊຽງຂວາງ

ເລກທີ 06 /ຈຂ.ຊຂ

ທີ່ຊຽງຂວາງ, ວັນທີ.09./.03./2017

# ຄໍາສັ່ງແນະນໍາ

## ວ່າດ້ວຍການເກັບລາຍຮັບອາກອນລາຍໄດ້ຈາກການ ຊື້ - ຂາຍ ໂອນສິດ ນໍາໃຊ້ທີ່ດິນ ສິ່ງປຸກສ້າງ ຫຼື ທີ່ດິນ ພ້ອມສິ່ງປຸກສ້າງ.

**ເຖິງ:** ບັນດາພະແນກການ, ບັນດາເມືອງ, ພະນັກງານ, ທະຫານ, ຕໍາຫຼວດ ແລະ ພໍ່ແມ່ປະຊາຊົນທົ່ວແຂວງຊຽງຂວາງ.

- **ອີງຕາມ:** ສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງທີ່ລະບຸໄວ້ໃນໝວດທີ IV ມາດຕາ 20 ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນແຫ່ງ ສປປ ລາວ.
- **ອີງຕາມ:** ກົດໝາຍວ່າດ້ວຍສ່ວຍສາອາກອນ(ສະບັບປັບປຸງ)ເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015.
- **ອີງຕາມ:** ບົດບັນທຶກກອງປະຊຸມປຶກສາຫາລື ການເກັບລາຍຮັບຄ່າທໍານຽມ,ອາກອນລາຍໄກ້ຈາກການຊື້ - ຂາຍ, ການໂອນສິດນໍາໃຊ້ທີ່ດິນ, ສິ່ງປຸກສ້າງ ຫຼື ທີ່ດິນພ້ອມສິ່ງປຸກສ້າງຄັ້ງວັນທີ 10 ມັງກອນ 2017.

ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດເກັບລາຍຮັບ ອາກອນລາຍໄດ້ຈາກການຊື້ - ຂາຍໂອນສິດນໍາໃຊ້ທີ່ດິນ ແລະ ສິ່ງປຸກສ້າງມອບເຂົ້າງົບປະມານໃຫ້ໄດ້ຕາມແຜນການວາງໄວ້ໃນແຕ່ລະສົກປີ.

## ເຈົ້າແຂວງອອກຄໍາສັ່ງແນະນໍາດັ່ງນີ້:

1. ມອບໃຫ້ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ຫ້ອງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເມືອງເປັນຜູ້ຄິດໄລ່ປະກອບເອກະສານຊື້ - ຂາຍ,ສິ່ງປຸກສ້າງ ຫຼື ທີ່ດິນພ້ອມສິ່ງປຸກສ້າງ ໃຫ້ຖືກຕ້ອງເໝາະສົມແລ້ວສົ່ງໃຫ້ເຈົ້າໜ້າທີ່ສ່ວຍສາອາກອນ, ທີ່ປະຈໍາການຢູ່ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ຫ້ອງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມເມືອງ.
2. ມອບໃຫ້ເຈົ້າໜ້າທີ່ສ່ວຍສາອາກອນປະກອບເອກະສານ ຄິດໄລ່ເກັບລາຍຮັບອາກອນລາຍໄດ້ຈາກການຊື້ - ຂາຍ, ໂອນສິດນໍາໃຊ້ທີ່ດິນ ແລະ ສິ່ງປຸກສ້າງ ຫຼື ທີ່ດິນພ້ອມສິ່ງປຸກສ້າງຕາມກົດໝາຍສ່ວຍສາອາກອນ (ສະບັບປັບປຸງ) ເລກທີ 07/ສພຊ, ລົງວັນທີ 15 ທັນວາ 2015 ມາດຕາ 48 ອັດຕາອາກອນລາຍໄດ້ ຂໍ້ 9 ລາຍໄດ້ຈາກການ ຊື້ - ຂາຍ, ການໂອນສິດນໍາໃຊ້ທີ່ດິນ, ສິ່ງປຸກສ້າງ ຫຼື ທີ່ດິນພ້ອມສິ່ງປຸກສ້າງ ນອກຈາກທີ່ໄດ້ກໍານົດໄວ້ໃນມາດຕາ 47 ຂໍ້ 18 ຂອງກົດໝາຍວ່າດ້ວຍສ່ວຍສາອາກອນ.
3. ການເກັບລາຍຮັບຄ່າທໍານຽມ, ອາກອນລາຍໄດ້ຈາກການ ຊື້ - ຂາຍ ການໂອນກໍາມະສິດນໍາໃຊ້ທີ່ດິນ, ສິ່ງປຸກສ້າງ ຫຼື ທີ່ດິນພ້ອມສິ່ງປຸກສ້າງແມ່ນໃຫ້ເກັບສະພາບທີ່ດິນທີ່ຂຶ້ນທະບຽນຖືກຕ້ອງຕາມລະບຽບ

ນັ້ນ ແລະ ທຸກຄັ້ງທີ່ມີການ ຊື້ - ຂາຍ ມອບໂອນໃຫ້ເສຍ ສອງສ່ວນຮ້ອຍ (2%) ຂອງລາຄາປະເມີນ, ຕາມເຂດລາຄາ ທີ່ດິນ ແລະ ສິ່ງປຸກສ້າງທີ່ທາງການໄດ້ກຳນົດ ແລະ ຮັບຮອງຕາມແຕ່ລະໄລຍະເພື່ອເປັນພື້ນຖານໃນການຄິດໄລ່ອາກອນລາຍໄດ້ໃຫ້ຖືກຕ້ອງຕາມຄວາມເປັນຈິງຕາມມາດຕາ 53 ວັກທີ 3.

4. ການເສຍອາກອນລາຍໄດ້ຈາກການ ຊື້ - ຂາຍ ໂອນສິດນຳໃຊ້ທີ່ດິນ, ສິ່ງປຸກສ້າງ ຫຼື ທີ່ດິນ ພ້ອມສິ່ງປຸກສ້າງໃຫ້ແກ່ລັດໃນເວລາທີ່ມີການມອບ - ໂອນ ແມ່ນອີງຕາມການຕົກລົງຂອງຜູ້ ຊື້ - ຜູ້ຂາຍ.

5. ມອບໃຫ້ພະແນກການ, ຂະແໜງການທີ່ກ່ຽວຂ້ອງ ຈົ່ງພ້ອມກັນເອົາໃຈໃສ່ ເຜີຍແຜ່ເຊື່ອມຊຶມໃຫ້ແກ່ພະນັກງານ, ທະຫານ, ຕຳຫຼວດ ແລະ ພໍ່ແມ່ປະຊາຊົນທົ່ວແຂວງຊຽງຂວາງຮັບຮູ້ເຂົ້າໃຈ ແລະ ພ້ອມກັນຈັດຕັ້ງປະຕິບັດ.

6. ມອບໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ, ພະແນກສ່ວຍສາອາກອນແຂວງ, ຫ້ອງ ຫຼື ໜ່ວຍງານສ່ວຍສາອາກອນປະຈຳເມືອງປະສານສົມທົບກັນເພື່ອຈັດຕັ້ງປະຕິບັດໃຫ້ວຽກນີ້ດຳເນີນໄປໄດ້ດີ, ມີປະສິດທິຜົນສູງ.

7. ຄຳສັ່ງສະບັບນີ້ປ່ຽນແທນຄຳສັ່ງແນະນຳສະບັບເລກທີ 20/ ຈຂ.ຊຂ, ລົງວັນທີ 1 ທັນວາ 2016 ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ຢ່າງເຂັ້ມງວດ.

ເຈົ້າແຂວງ

ດຣ. ຄຳປາວ
Dr. Khampao